*ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກໍາແກ້ໄຂຄວາມທຸກຍາກ (ຊສທ) ຢູ່ ສປປ ລາວ*

*ບົດລາຍງານຫຍໍ້ ສະບັບທີ 08 /2010:*

# *ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຈາກການລົງທຶນໃນກິດຈະການບໍ່ແຮ່*

*ຊຸດບົດລາຍງານຫຍໍ້ທາງດ້ານນະໂຍບາຍນີ້ ແມ່ນໄດ້ຂຽນຂື້ນໂດຍໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກໍາຫຼຸດຜ່ອນຄວາມທຸກຍາກຂອງ ສປປ ລາວ ເພື່ອຊີ້ໃຫ້ເຫັນເຖິງບັນຫາດ້ານຄວາມທຸກຍາກ ແລະ ສິ່ງແວດລ້ອມໃນປະຈຸບັນ ແລະ ຂະບວນການວາງແຜນການໃນລະດັບຊາດ. ຈຸດປະສົງຂອງບົດລາຍງານຫຍໍ້ນີ້ ແມ່ນເພື່ອໃຫ້ຂໍ້ມູນທີ່ເນັ້ນໃຫ້ເຫັນເຖິງຫຼັກຖານ ແລະ ທາງເລືອກທາງດ້ານນະໂຍບາຍໃນທາງປະຕິບັດ ເພື່ອສະໜັບສະໜູນການຫັນປ່ຽນທາງດ້ານເສດຖະກິດຂອງລາວໄປສູ່ເສັ້ນທາງການພັດທະນາແບບຍືນຍົງສໍາລັບຜູ້ທຸກຍາກທີ່ສຸດ.*

*ເອກະສານຈັດພິມຜ່ານມາ:*

*01/2010: ການຫຼຸດຜ່ອນຄວາມທຸກຍາກ ແລະ ການຄຸ້ມຄອງສິ່ງແວດລ້ອມ*

*02/2010: ຕົວຊີ້ວັດທາງດ້ານຄວາມທຸກຍາກ - ສິ່ງແວດລ້ອມ*

*03/2010: ການລົງທຶນລົງທຶນ ແລະ ການສົ່ງເສີມສິດທິທາງດ້ານເສດຖະກິດ ຂອງແມ່ຍິງ*

*04/2010: ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຂອງການລົງທຶນໃນການປູກໄມ້*

*05/2010: ການລົງທຶນດ້ານເຊື້ອໄຟຊີວະພາບ*

*06/2010: ການລົງທຶນດ້ານພຟ້ານໍ້າຕົກ*

*07/2010: ການລົງທຶນ ແລະ ຄວາມຍືນຍົງໃນຂະແໜງການປ່າໄມ້*


*ສັງລວມຫຍໍ້* ເນື່ອງຈາກບໍ່ແຮ່ເປັນຂະແໜງການທີ່ສໍາຄັນຂະແໜງໜຶ່ງໃນການປະກອບສ່ວນຕໍ່ກັບການຈະເລີນເຕີບໂຕທາງດ້ານເສດຖະກິດຂອງປະເທດລາວ ໃນຊ່ວງຫຼາຍປີຜ່ານມາ, ການລົງທຶນໃນຂະແໜງການບໍ່ແຮ່ ຈຶ່ງຖືເປັນປັດໄຈອັນສໍາຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ໂຄງການບໍ່ແຮ່ສ້າງວຽກເຮັດງານທໍາໃຫ້ກັບຄົນລາວ ແລະ ທຶນຮອນ ທີ່ມັນໄດ້ເພີ່ມເຂົ້າສູ່ເສດຖະກິດຂອງລາວ ສາມາດນໍາໃຊ້ເຂົ້າໃນການສະໜັບສະໜູນພາກການສຶກສາ, ການແກ້ໄຂຄວາມທຸກຍາກ ແລະ ຂົງເຂດອື່ນໆທີ່ປະກອບສ່ວນຕໍ່ກັບການພັດທະນາດ້ານເສດຖະກິດ-ສັງຄົມຂອງປະເທດ.

ເຖິງແນວໃດກໍ່ຕາມ, ຂະແໜງການບໍ່ແຮ່ຢູ່ໃນ ສປປ ລາວ ແມ່ນຍັງເປັນຂະແໜງການໜຶ່ງທີ່ມີການກ່າວເຖິງກັນຫຼາຍສໍາລັບການລົງທຶນ, ເຮັດໃຫ້ມີຄວາມສ່ຽງທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມຕໍ່ກັບຜູ້ລົງທຶນ, ຜູ້ພັດທະນາ ແລະຊຸມຊົນຢູ່ໃນເຂດບໍ່ແຮ່ດັ່ງກ່າວ. ເຖິງແມ່ນວ່າການລົງທຶນຢູ່ໃນຂະແໜງການນີ້ຈະເປັນແຮງຂັບເຄື່ອນໃນການເຕີບໂຕທາງດ້ານເສດຖະກິດ ແລະ ການຫຼຸດຜ່ອນຄວາມທຸກຍາກໄດ້, ແຕ່ຖ້າຫາກວ່າບໍ່ມີກົດລະບຽບ ແລະ ຍຶດໝັ້ນຕາມມາດຕະຖານແລ້ວ, ການຂຸດຄົ້ນບໍ່ແຮ່ສາມາດເຮັດໃຫ້ເກີດຜົນກະທົບຕໍ່ທີ່ດິນ ແລະ ການດໍາລົງຊີວິດ ໄປພ້ອມກັບການເສື່ອມໂຊມຂອງສະພາບແວດລ້ອມ. ໃນເມື່ອວ່າບໍ່ສາມາດຈະຫຼີກເວັ້ນໄດ້ເຖິງການເສື່ອມໂຊມທາງດ້ານສະພາບແວດລ້ອມໃນລະດັບໃດໜຶ່ງນັ້ນ, ຈຶ່ງເປັນສິ່ງສໍາຄັນທີ່ບໍລິສັດຂຸດຄົ້ນບໍ່ແຮ່ ຈະຕ້ອງມີຄໍາໝັ້ນສັນຍາໄລຍະຍາວຕັ້ງແຕ່ຫົວທີວ່າຈະຕ້ອງຟື້ນຟູພື້ນທີ່ຄືນໃນເມື່ອໂຄງການສິ້ນສຸດລົງແລ້ວ.

ບົດສັງລວມບັນຫາຫຍໍ້ສະບັບນີ້ລວມມີແນວຄວາມຄິດທີ່ທາງລັດຖະບານ ສປປ ລາວ ອາດຈະເຮັດການຊັ່ງຊາພິຈາລະນາ ເພື່ອຮັບປະກັນບໍ່ໃຫ້ເກີດມີຜົນກະທົບທາງລົບໄປຫຼາຍກວ່າທາງບວກ ທັງໃນໄລຍະສັ້ນ ແລະ ໄລຍະຍາວຈາກການລົງທຶນໃນການຂຸດຄົ້ນບໍ່ແຮ່.




*ພາບໂດຍ: IUCN*

# 1. ການລົງທຶນໃນການຂຸດຄົ້ນບໍ່ແຮ່

ຂະແໜງບໍ່ແຮ່ເປັນໜຶ່ງໃນຂະແໜງການປະກອບສ່ວນຫຼາຍທີ່ສຸດ ເຂົ້າໃນລາຍໄດ້ແຫ່ງຊາດ ຂອງ ສປປ ລາວ ແລະ ມີບົດບາດອັນສຳຄັນຢູ່ໃນຍຸດທະສາດການພັດທະນາເສດຖະກິດຂອງລັດຖະບານ ສປປ ລາວ. ມັນຍັງເປັນຂະແໜງການໜຶ່ງໃນ4ຂະແໜງການບຸລິມະສິດສຳລັບການລົງທຶນ ແລະ ການສ້າງອຸດສາຫະກຳ(ຂະແໜງການອື່ນແມ່ນພະລັງງານ, ກະສິກຳ ແລະ ການທ່ອງທ່ຽວ)[1]. ອີງຕາມຂໍ້ມູນຂອງທະນາຄານໂລກ, ຂະແໜງຂຸດຄົ້ນບໍ່ແຮ່ ແລະ ຂຸດຄົ້ນຫີນລວມກັນປະກອບສ່ວນປະມານ 2.5 ເປີເຊັນ ຢູ່ໃນອັດຕາການເຕີບໂຕໂດຍລວມ 7.5%, ແລະ FDI ຢູ່ໃນການຂຸດຄົ້ນບໍ່ແຮ່ກວມເອົາປະມານ 18% ຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທັງໝົດໃນປີ 2009. [2]

ກົດໝາຍແຮ່ທາດທີ່ປະກາດໃຊ້ໃນ ເດືອນທັນວາ ປີ 2008 ຂອງ ສປປ ລາວ ກ່າວວ່າມັນມີເປົ້າໝາຍທີ່ຈະຮັບປະກັນດ້ານປະສິດທິພາບຂອງການສຳຫຼວດ,ການຂຸດຄົ້ນ, ແລະ ການປຸງແຕ່ງແຮ່ທາດໄປພ້ອມກັບການປົກປ້ອງສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ-ສັງຄົມ[3].

ຍຸດທະສາດການລົບລ້າງຄວາມທຸກຍາກ ແລະ ການເຕີບໂຕແຫ່ງຊາດຂອງ ສປປ ລາວ (NGPES) ກຳນົດເອົາການຂຸດຄົ້ນບໍ່ແຮ່ (ລວມທັງໂລຫະ, ແຮ່ທາດອຸດສາຫະກຳ, ວັດສະດຸກໍ່ສ້າງ, ຫີນເຍື່ອແກ້ວ, ແລະແຮ່ເຊື້ອເພີງ)ເປັນຂະແໜງການບຸລິມະສິດສຳລັບການລົງທຶນ ເນື່ອງຈາກວ່າມັນມີທ່າແຮງຕໍ່ກັບການກະຕຸ້ນການເຕີບໂຕຂອງເສດຖະກິດ ແລະ ເພີ່ມລາຍຮັບຂອງລັດຖະບານ[4]. ຈົນມາຮອດຊຸມປີ 1990, ມີການດຳເນີນການທາງດ້ານບໍ່ແຮ່ຂະໜາດນ້ອຍ ແລະ ແບບຫັດຖະກຳເທົ່ານັ້ນຢູ່ໃນ ສປປ ລາວ ແລະ ພາກອຸດສາຫະກຳປະກອບຢູ່ໃນ GDP ຂອງຊາດພຽງແຕ່ 0.56%. ເຖິງແນວໃດກໍ່ຕາມ,ຂະແໜງການນີ້ໄດ້ເຕີບໂຕຢ່າງໄວມາຕັ້ງແຕ່ປີ 2000, ແລະ ໃນປີ 2007 ມັນກວມເອົາ 8% ຂອງ GDP: ທາງລັດຖະບານລາວ ໄດ້ຄາດກະວ່າ ມັນຈະໃຫ້ໄດ້ເກືອບ 10% ຂອງ GDP ໃນປີ 2010[5] (ເບິ່ງລາຍລະອຽດໃນຮູບທີ 1[6]). ຊັບພະຍາກອນເປົ້າໝາຍລວມມີຄຳ, ທອງ, ເງິນ, ຖ່ານຫີນ, ກົ່ວ, ຍິບຊຳ, ໂປແຕັສ, ຫີນປູນ, ແລະ ແກ້ວປະເສີດ.

*ຮູບທີ 1: ເປີເຊັນການປະກອບສ່ວນຂອງບໍ່ແຮ່ຕໍ່ GDP ຂອງ ສປປລາວ*




ການດຳເນີນການບໍ່ແຮ່ ອັນທີ່ເປັນທາງການຂອງ ສປປ ລາວ ແມ່ນລິເລີ່ມຢູ່ທີ່ເຊໂປນ ແຂວງສະຫວັນນະເຂດ ໃນປີ 2002. ອີງຕາມການສຳຫຼວດທາງດ້ານທໍລະນີສາດຂອງສະຫະລັດບອກວ່າ ມີໂຄງການລົງທຶນໃນຂະແໜງການບໍ່ແຮ່ຢູ່ໃນລາວຈຳນວນ 118 ໂຄງການ ໃນປີ 2006, ເຊິ່ງໃນນັ້ນມີ 33 ໂຄງການແມ່ນໄດ້ຮັບທຶນຈາກນັກລົງທຶນຕ່າງປະເທດ. ອີງຕາມບົດລາຍງານອື່ນໆ ແມ່ນມີຈຳນວນ 154 ບໍລິສັດມີສ່ວນພົວພັນຢູ່ໃນຂະແໜງການບໍ່ແຮ່ຂອງລາວໃນເດືອນພະຈິກ 2009, ທີ່ດຳເນີນການຢູ່ໃນຈຳນວນທັງໝົດ 266 ໂຄງການ[7]. ອີງຕາມຂໍ້ມູນຂອງກົມບໍແຮ່ ໃນ ເດືອນພະຈິກ 2010, ມີໂຄງການບໍ່ແຮ່ທັງໝົດ 263 ໂຄງການໃນ ສປປ ລາວ.ໂຄງການບໍ່ແຮ່ໃນປະຈຸບັນແມ່ນດຳເນີນການຢູ່ພາຍໃຕ້ຂໍ້ຕົກລົງວ່າດ້ວຍການ ຊອກຄົ້ນ, ການສຳຫຼວດ ແລະ ການຂຸດຄົ້ນ (MEPA), ເຊິ່ງມີຄວາມແຕກຕ່າງສຳລັບຜູ້ລົງທຶນແຕ່ລະລາຍ ແລະ ອີງຕາມຮູບແບບທີ່ທາງກະຊວງແຜນການ ແລະ ການລົງທຶນ ສ້າງຂຶ້ນມາໃນເບື້ອງຕົ້ນໃນການປຶກສາຫາລືກັບກະຊວງພະລັງງານແລະບໍ່ແຮ່ (MEM)[8]. ປະຈຸບັນນີ້, ສປປ ລາວ ແມ່ນນຳໃຊ້ກົດໝາຍວ່າດ້ວຍແຮ່ທາດເຊິ່ງເປັນກົດໝາຍສະບັບໃໝ່ທີ່ໄດ້ມີການຮັບຮອງຈາກສະພາແຫ່ງຊາດໃນທ້າຍປີ 2008.

## 2. ສິ່ງທ້າທາຍຕໍ່ກັບຂະແໜງການບໍ່ແຮ່ຂອງລາວ

- ຂະແໜງການບໍ່ແຮ່ຂອງລາວປະເຊີນໜ້າກັບສິ່ງທ້າທາຍອັນສຳຄັນຫຼາຍຢ່າງທີ່ມີຜົນກະທົບຕໍ່ກັບຄວາມຍືນຍົງທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຂອງຕົນເອງ ແລະ ເຊິ່ງອາດຈະມີຜົນສະທ້ອນອັນສຳຄັນເມື່ອຂະແໜງການນີ້ຂະຫຍາຍ ຕົວອອກຄື: ໂຄງການຂຸດຄົ້ນບໍ່ແຮ່ເກືອບທັງໝົດຢູ່ໃນ ສປປ ລາວ ຍັງຢູ່ໃນໄລຍະຊອກ ຄົ້ນ, ສຳຫຼວດ ແລະ/ຫຼືຂະໜາດນ້ອຍ,ເຊິ່ງບໍລິສັດທີ່ດຳເນີນການບໍ່ແຮ່ ຂະໜາດກາງແມ່ນມີຈຳນວນຈຳກັດ. ບັນດາບໍລິສັດທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໃນການດຳເນີນບໍ່ແຮ່ຂະໜາດນ້ອຍແມ່ນອາດຈະຂາດແຄນທາງດ້ານທຶນ ຮອນທີ່ຈະນຳພາໂຄງການກ້າວໄປສູ່ການຜະລິດເຕັມລະດັບ ແລະ ອາດຈະມີການຈັດຕັ້ງປະຕິບັດການປ້ອງກັນເລື່ອງສິ່ງແວດລ້ອມ ແລະ ສັງຄົມໜ້ອຍ. ຕົວຢ່າງ,ເມື່ອບໍ່ດົນມານີ້ກໍ່ມີລາຍງານທີ່ປະກົດໃນສື່ກ່ຽວກັບວ່າມີຜົນກະທົບຈາກມົນລະພິປົນເປື້ອນເຊິ່ງເນື່ອງມາຈາກການຂຸດຄົ້ນແຮ່ແບບທີ່ບໍ່ມີການ ຄຸ້ມຄອງເປັນທາງການ[9]

---

[1] ວໍລະເດດ, ສາຍຄຳ. 2009. *ອຸດສາຫະກຳການປູກໄມ້ຢູ່ໃນລາວ: ການກວດກາບົດບາດຂອງກະຊວງແຜນການ ແລະການລົງທຶນ. ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ* (NERI), ສະຖາບັນສາກົນ ເພື່ອການພັດທະນາທີ່ຍືນຍົງ (IISD), ແລະ IUCN.

[2] ທະນາຄານໂລກ. 2010. *ການຕິດຕາມເສດຖະກິດຂອງ ສປປ ລາວ ເດືອນກັນຍາ* 2010. ຫ້ອງການທະນາຄານໂລກປະຈຳ ສປປ ລາວ, ນະຄອນຫຼວງວຽງຈັນ.

[3] ສະພາແຫ່ງຊາດ ສປປ ລາວ. 2010. *ກົດໝາຍແຮ່ທາດ.* [ຮ່າງເອກະສານປະຕິບັດການ ແລະສະບັບແປບໍ່ເປັນທາງການ, ມິນາ 2010].

[4] Callander, Tom. 2007. *ເອກະສານຄົ້ນຄວ້າພື້ນຖານ: ຜົນກະທົບທາງດ້ານສິ່ງແວດລ້ອມຂອງການເປີດເສລີການຄ້າຢູ່ໃນຂະແໜງໄຟຟ້ານ້ຳຕົກ, ບໍ່ແຮ່ ແລະວັດສະດຸກໍ່ສ້າງຂອງ ສປປ ລາວ*. ການປະເມີນທາງດ້ານການຄ້າ ແລະສິ່ງແວດລ້ອມແບບເລັ່ງດ່ວນ (RTEA), IUCN ປະຈຳ ສປປ ລາວ.

[5] ສູນຂໍ້ມູນທຸລະກິດຂອງສະພາການຄ້າ ແລະອຸດສາຫະກຳແຫ່ງຊາດລາວ. ເດືອນມີນາ 2008. "ການເພີ່ມບັນຍາກາດໃນການລົງທຶນສຳລັບຂະແໜງບໍ່ແຮ່ຢູ່ໃນ ສປປ ລາວ". *ຖະແຫຼງການທາງດ້ານການດຳເນີນທຸລະກິດ*, ສະບັບທີ 6; ສປປ ລາວ, ກະຊວງພະລັງງານ ແລະບໍ່ແຮ່. 2008. *ແຜນພັດທະນາທາງດ້ານຍຸດທະສາດຂະແໜງພະລັງງານ ແລະບໍ່ແຮ່ສຳລັບປີ* 2006-10 *ຫາ* 2020.

[6] ອີງໃສ່ຂໍ້ມູນຈາກ: ກອງສຳຫຼວດທໍລະນີສາດຂອງສະຫະລັດ (USGS), 2008, 2007 *ປຶ້ມປະຈຳປີທາງດ້ານແຮ່ງທາດຂອງ ສປປ ລາວ ແລະສູນຂໍ້ມູນທາງດ້ານທຸລະກິດ*, ປີ 2008.

[7] ອົງການຊັບພະຍາກອນນ້ຳ ແລະສິ່ງແວດລ້ອມ (WREA) ແລະ IUCN. 2009. ການສະໜັບສະໜູນການແນະນຳການປະເມີນສິ່ງແວດລ້ອມທາງດ້ານຍຸດທະສາດຢູ່ໃນ ສປປ ລາວ: *ບົດລາຍງານໂຄງການສຸດທ້າຍ*. ນະຄອນຫຼວງວຽງຈັນ, ສປປ ລາວ.

[8] ສູນຂໍ້ມູນເສດຖະກິດ, 2008.

[9] ໜັງສືພິມວຽງຈັນໄທມ໌. 7 ມິຖຸນາ 2010. "ການເຕີບໂຕຂອງບໍ່ແຮ່ນຳມາເຊິ່ງຄວາມຢ້ານກົວຕໍ່ກັບສານເຄມີທີ່ເປັນອັນຕະລາຍ"; ໜັງສືພິມວຽງຈັນໄທມ໌. 18 ພຶດສະພາ 2010. "ອຳນາດການປົກຄອງແຂວງອັດຕະປືມີຄວາມກັງວົນກັບມົນລະພິດທາງນ້ຳ".

- ຄວາມບໍ່ແນ່ນອນທາງດ້ານລາຄາຂອງຜະລິດຕະພັນໂລຫະຢູ່ໃນຕະຫລາດໂລກ ເຊັ່ນ: ທອງ ແລະ ຄຳ ນັ້ນຍັງເຮັດໃຫ້ເກີດບັນຫາຕໍ່ກັບການລົງທຶນ ແລະ ຜູ້ລົງທຶນໃນດ້ານບໍ່ແຮ່ນຳອີກ, ໂດຍສະເພາະໃນລະຫວ່າງຊ່ວງວິກິດການທາງດ້ານການເງິນຂອງໂລກເມື່ອບໍ່ດົນມານີ້. ລາຄາທອງທີ່ຕົກຕ່ຳລົງຫຼາຍຢູ່ໃນຕະຫຼາດໂລກເຮັດໃຫ້ເກີດບັນຫາກັບຜູ້ດຳເນີນການບໍ່ແຮ່ຕົ້ນຕໍຂອງ ສປປ ລາວ, ບໍລິສັດ OZ Minerals, ເຊິ່ງໄດ້ໂຈະການຄ້າເນື່ອງຈາກບໍລິສັດ ໄດ້ພະຍາຍາມຈັດການເລື່ອງການເງິນຄືນໃໝ່ ເພື່ອຊຳລະໜີ້ສິນຂອງຕົນເອງ.[10]

- ການດຳເນີນການທາງດ້ານບໍ່ແຮ່ຍັງມີຄວາມຕ້ອງການ ພະລັງງານ ແລະ ພື້ນຖານໂຄງລ່າງ ເຊັ່ນ: ເສັ້ນທາງ ເຊິ່ງອາດຈະມີຄວາມຈຳເປັນທີ່ຈະຕ້ອງໄດ້ຮັບການຊ່ວຍເຫຼືອຈາກທາງລັດຖະບານລາວ ເພື່ອເຮັດໃຫ້ເກີດມີກຳໄລໄດ້. ບອັກໄຊທ໌ (Bauxite) ແມ່ນຂົງເຂດການເຕີບໂຕອັນໜຶ່ງຢູ່ໃນຂະແໜງບໍ່ແຮ່ຂອງລາວ ແລະ ເຖິງແມ່ນວ່າການຂຸດຄົ້ນແຮ່ ບອັກໄຊທ໌ ບໍ່ຕ້ອງການພະລັງງານຫຼາຍ ແຕ່ໂຮງງານຫຼອມອາລູມິນຽມຕ້ອງການພະລັງງານລາຄາຖືກໃນປະລິມານທີ່ຫຼາຍ–ເທັກໂນໂລຢີທັນສະໄໝເກືອບທັງໝົດຍັງຕ້ອງການພະລັງງານປະມານ 13,000 ຫາ 15,000 ກິໂລວັດໂມງ ເພື່ອຫຼອມອາລູມິນຽມ 1 ໂຕນ, ໃນລາຄາ 0.025-0.035 ໂດລາສະຫະລັດຕໍ່ກິໂລວັດ ເພື່ອໃຫ້ມີກຳໄລ. ປະຈຸບັນນີ້ ສປປ ລາວ ຂາຍໄຟຟ້າໃນລາຄາ 0.05-0.06 ໂດລາສະຫະ ລັດຕໍ່ກິໂລວັດ[11].

- ເຖິງແມ່ນວ່າ ໂຄງການບໍ່ແຮ່ຈະເພີ່ມລາຍຮັບໃຫ້ກັບລັດຖະບານ, ສ້າງວຽກເຮັດງານທຳ ແລະ ປະກອບສ່ວນຕໍ່ກັບການພັດທະນາຊົນນະບົດ, ແຕ່ການຂຸດຄົ້ນບໍ່ແຮ່ ສາມາດສ້າງຜົນກະທົບທາງລົບຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຊຸມຊົນຢູ່ໃນທ້ອງຖິ່ນ. ສິ່ງເຫຼົ່ານີ້ລວມເຖິງການແຜ່ກະຈາຍຂອງມົນລະພິດທີ່ເປັນການທຳລາຍແຫຼ່ງນ້ຳ ແລະ ຝຸງປາ, ການສູນເສຍທີ່ດິນ, ຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນແລະເພີ່ມການອົບພະຍົກເຂົ້າໄປສູ່ພື້ນທີ່ ສະເພາະສານໄຊຍານາຍທີ່ໃຊ້ໃນການດຳເນີນການສະກັດແຮ່ຄຳບັງຄັ້ງກໍມີການຮົ່ວໄຫຼຈາກການຂຸດຄົ້ນຂະໜາດນ້ອຍທີ່ບໍ່ໄດ້ຮັບອະນຸຍາດ ເຊັ່ນດຽວກັນກັບຈາກຜູ້ດຳເນີນການຂະໜາດໃຫຍ່ທີ່ໄດ້ຮັບອະນຸຍາດ, ເຊິ່ງກໍ່ເຮັດໃຫ້ບັນດາຝຸງປາຕາຍແລະມີການປົນເປື້ອນໃນນ້ຳ ແລະ ດິນກະສິກຳ.

ການບັງຄັບໃຊ້ກົດໝາຍທີ່ກ່ຽວຂ້ອງກັບໂຄງການບໍ່ແຮ່ຍັງບໍ່ທັນໜັກແໜ້ນຢ່າງທົ່ວເຖິງ, ພ້ອມກັບການບັງຄັບໃຊ້ຜົນຂອງຄວາມຕ້ອງການຈາກການ ປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) ແມ່ນຍັງເຮັດບໍ່ໄດ້ດີ ແລະ ມີການຕິດຕາມເລື່ອງຜົນກະທົບຂອງໂຄງການບໍ່ແຮ່ພຽງແຕ່ເລັກນ້ອຍນອກຈາກຜູ້ດຳເນີນການໃນລະດັບສາກົນຂະໜາດໃຫຍ່. ເຖິງແນວໃດກໍ່ຕາມ, ໄດ້ສັງເກດເຫັນວ່າການໃຫ້ຄຳເຫັນຈາກລັດຖະບານລາວເມື່ອບໍ່ດົນມານີ້ທີ່ມີຕໍ່ກັບບໍລິສັດຊີໂນ-ລາວ ຈຳກັດ (Slaco) ແມ່ນໄດ້ຍົກໃຫ້ເຫັນຄວາມເປັນຫ່ວງທີ່ຕ້ອງເອົາໃຈໃສ່ຢູ່ໃນ ບົດການປະເມີນຜົນ ກະທົບທາງດ້ານສິ່ງແວດລ້ອມຂອງບໍລິສັດທີ່ເຫັນມີປະມານ 50 ລາຍ ການ, ອັນນີ້ເປັນສິ່ງທີ່ດີ[12]. ການພັດທະນາການທີ່ດີອີກອັນໜຶ່ງ ກໍຄື ລັດຖະບານລາວ ໄດ້ຖອນຄືນ 16 ອະນຸຍາດສຳປະທານຢ່າງເປັນທາງການ ໃນໄລຍະມາຮອດ ເດືອນ ທັນວາ 2010.

## 3. ການຫຼຸດຜ່ອນຄວາມສ່ຽງ: ສິ່ງທີ່ຄວນເອົາໃຈໃສ່ໃນການ ລົງທຶນໃນບໍ່ແຮ່

ການລົງທຶນທາງດ້ານບໍ່ແຮ່ແມ່ນພົວພັນກັບຄວາມສ່ຽງທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມສູງ ກັບຜູ້ລົງທຶນ, ລັດຖະບານ ເຊັ່ນດຽວກັນກັບ ຊຸມຊົນ. ດັ່ງນັ້ນ, ການປະເມີນ ແລະ ການຫຼຸດຜ່ອນຄວາມສ່ຽງເຫຼົ່ານີ້ເປັນຂັ້ນຕອນທີ່ສຳຄັນໃນການກຳນົດວ່າຄວນຈະດຳເນີນໂຄງການຕໍ່ໄປ ແລະ ປັບປຸງຜົນກະທົບທາງດ້ານອຸດສາຫະກຳບໍ່ແຮ່ ນັ້ນຫຼືບໍ. ຜູ້ລົງທຶນຢູ່ໃນຂະແໜງບໍ່ແຮ່ຈຳເປັນຈະຕ້ອງປະຕິບັດໃຫ້ໄດ້ຕາມຄາດໝາຍພື້ນຖານ3ອັນຄື: ຄວາມຈະເລີນທາງດ້ານເສດຖະກິດ,ຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ຄວາມສະເໝີພາບທາງສັງຄົມ[13], ແລະ ມີທາງເລືອກ ແລະ ເຄື່ອງມືທາງດ້ານນະໂຍບາຍຫຼາຍອັນໃຫ້ກັບຜູ້ຕັດສິນບັນຫາຢູ່ໃນ ສປປ ລາວ ຄື:

***ການປະເມີນສິ່ງແວດລ້ອມແບບຍຸດທະສາດ (SEA) ແລະ ການວາງແຜນໃນພາກພື້ນ.*** SEA ໝາຍເຖິງຂະບວນການອັນເປັນລະບົບສຳລັບການປະເມີນຜົນທາງດ້ານສິ່ງແວດລ້ອມທີ່ເກີດມາຈາກນະໂຍບາຍ, ແຜນການ ແລະ ແຜນງານການພັດທະນາ. ຈະບໍ່ຄືກັບການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ (EIAs) ຫຼື ແມ້ແຕ່ການປະເມີນຜົນກະທົບແບບສະສົມ, SEAs ໃຫ້ຂໍ້ມູນເກີນກວ່າຜົນກະທົບໃນລະດັບດຽວ. ດັ່ງນັ້ນ, ໄດ້ຖືກອອກແບບເພື່ອສະໜັບສະໜູນການຕັດສິນໃຈໃນລະດັບພາກພື້ນ ແລະ ລະດັບຊາດກ່ຽວກັບການພັດທະນາ.

***Box 1: ການປະເມີນສິ່ງແວດລ້ອມທາງດ້ານຍຸດທະສາດ (SEA) ແລະ ຂະແໜງການບໍ່ແຮ່: ຄຳເຫັນແນະນຳຂອງໂຄງການ SISEA.***

ທາງອົງການ IUCN ປະຈຳລາວ ໄດ້ຈັດຕັ້ງປະຕິບັດໂຄງການໜຶ່ງໂດຍການຮ່ວມມືກັບກົມສິ່ງແວດລ້ອມຂອງ WREA ໃນປີ 2009, ນັ້ນກໍ່ຄືໂຄງການ "ສະໜັບສະໜູນການປະເມີນສິ່ງແວດລ້ອມທາງດ້ານຍຸດທະສາດຢູ່ໃນ ສປປ ລາວ (SISEA)" ໄດ້ແນະນຳການພັດທະນາແຜນການປອງດອງທີ່ຮັດກຸມສຳລັບການແນະນຳ SEA ເຂົ້າມາ, ລວມທັງການແຕ່ງຕັ້ງຄະນະປະຕິບັດງານຂອງລັດຖະບານລາວ, ການສ້າງຈິດສຳນຶກເພີ່ມເຕີມກ່ຽວກັບ SEA ໃຫ້ກັບບັນດາຜູ້ຕັດສິນບັນຫາ ແລະພາກສ່ວນກ່ຽວຂ້ອງຕ່າງ, ການສ້າງຄູ່ມື ແລະເອກະສານຕ່າງໆເປັນພາສາລາວ, ແລະການສ້າງແຜນທີ່ລະບົບ EIA ແລະປະສິດທິຜົນຂອງມັນ. ສິ່ງສຳຄັນທີ່ສຸດໂຄງການຍັງສັງເກດເຫັນຄວາມຈຳເປັນຕ້ອງໄດ້ເນັ້ນໜັກເຖິງການວາງແຜນແບບປະສົມປະສານ ແລະເອົາໃຈໃສ່ເລື່ອງສິ່ງແວດລ້ອມໃນໄລຍະຍາວ ຢູ່ໃນຂະແໜງການບໍ່ແຮ່, ໂດຍການໃຫ້ຄຳເຫັນແນະນຳວ່າ:

- *ການວິເຄາະລະອຽດເລື່ອງການຈັດຕັ້ງປະຕິບັດ EIA ແລະ ມາດຕະການໃນການປົກປ້ອງອື່ນໆທີ່ຈຳເປັນຕ້ອງໄດ້ເຮັດຢູ່ໃນອຸດສາຫະກຳບໍ່ແຮ່.*
- *ການປຶກສາຫາລືຄວາມຈະໄດ້ລິເລີ່ມລົມກັບກົມບໍ່ແຮ່, ກະຊວງພະລັງງານ ແລະບໍ່ແຮ່ ກ່ຽວກັບການຄັດເລືອກນະໂຍບາຍ, ແຜນການ, ແຜນງານ ຫຼື ນິຕິກຳເພື່ອເຮັດການທົດລອງ SEA ຢູ່ໃນຂະແໜງການ.*
- *ແຜນປະຕິບັດການຄວນຈະໄດ້ຮັບການສ້າງຂຶ້ນເພື່ອຈັດຕັ້ງປະຕິບັດ SEA ຢູ່ໃນຂະແໜງການບໍ່ແຮ່.*
- *ຄວນຈັດມີການປະຊຸມໂຕະມົນກ່ຽວກັບ SEA ຮ່ວມກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດ SEA ຢູ່ໃນຂະແໜງການບໍ່ແຮ່.*

(ແຫຼ່ງຂໍ້ມູນ: WREA ແລະ IUCN. 2009. ໂຄງການສະໜັບສະໜູນການປະເມີນສິ່ງແວດລ້ອມທາງດ້ານຍຸດທະສາດຢູ່ໃນ ສປປ ລາວ: ບົດລາຍງານສຸດທ້າຍຂອງໂຄງການ. ນະຄອນຫຼວງວຽງຈັນ, ສປປ ລາວ)

---

[10] MMG. 18 ມິຖຸນາ 2009. "ການເປີດຕົວກຸ່ມທຶນລະດັບໂລກ". http://www.mmg.com/shared/1068.aspx; Sydney Morning Herald. 23 ມີນາ 2010. "Minmetals Toasts Bargain Buy".

[11] ມູນລະນິທິ Heinrich Boll, WWF ແລະ IISD. 2009. *ການຂຸດຄົ້ນແຮ່ທາດອາລູມິນຽມ: ບົດບາດຂອງຈີນຢູ່ໃນພາກພື້ນແມ່ນ້ຳຂອງ.*

[12] ມູນລະນິທິ Heinrich Boll, WWF ແລະ IISD, 2009.

[13] Bergeron, Philippe. 2002. "ການລົງທຶນໃນບໍ່ແຮ່ໃນອາຊີ: ສິ່ງທ້າທາຍ ແລະໂອກາດໃນສາມເສັ້ນພື້ນຖານ". ການນຳສະເໜີຢູ່ໃນເວທີໂລກ OECD *ໃນການລົງທຶນສາກົນ*, 7-8 ກຸມພາ 2002, ປາຣີ.

SEAs ມີຈຸດມຸ່ງໝາຍເພື່ອຮັບປະກັນໃຫ້ສິ່ງທີ່ໜ້າເປັນຫ່ວງທາງດ້ານສິ່ງແວດລ້ອມໄດ້ຮັບການເອົາໃຈໃສ່ໃນຂັ້ນຕົ້ນຂອງການວາງແຜນ ທີ່ສາມາດເປັນໄປໄດ້. ຢູ່ ສປປ ລາວ ໃນປະຈຸບັນແມ່ນບໍ່ມີນະໂຍບາຍ ຫຼືຂໍ້ຮຽກຮ້ອງທາງດ້ານກົດໝາຍໃນການໃຫ້ເຮັດ SEAs, ເຖິງແມ່ນວ່າມີຫຼາຍໂຄງການ SEA ທີ່ໄດ້ເຮັດທົດລອງຢູ່ໃນຫຼາຍຂະແໜງການແລ້ວ ເຊັ່ນ: ເມື່ອບໍ່ດົນມານີ້ແມ່ນໂຄງການ SEA ກ່ຽວກັບໂຄງການໄຟຟ້ານໍ້າຕົກທີ່ສະເໜີເຮັດຕາມລໍາແມ່ນໍ້າຂອງ ເຊິ່ງດໍາເນີນ ຂຶ້ນໂດຍຄະນະກໍາມາທິການແມ່ນໍ້າ ຂອງສາກົນ (MRC). ເຖິງແນວໃດກໍ່ຕາມການນໍາໃຊ້ SEA ຢູ່ໃນຂະແໜງບໍ່ແຮ່ຂອງລາວ, ກໍຈະມີຜົນປະໂຫຍດຫຼາຍຢ່າງໃນການວາງແຜນການກ່ຽວກັບອະນາຄົດຂອງອຸດສາຫະກໍາ ແລະ ການແກ້ໄຂ ຜົນກະທົບທາງດ້ານສິ່ງແວດລ້ອມໄລຍະຍາວຂອງມັນ.

> "ໃນຂະນະທີ່ບໍ່ແຮ່ໃດໜຶ່ງບໍ່ຍືນຍົງ, ການເຮັດບໍ່ແຮ່ສາມາດສ້າງຄວາມຍືນຍົງການພັດທະນາ. ບໍລິສັດບໍ່ແຮ່ຈະຕ້ອງຮັບປະກັນວ່າ ເມື່ອຕົນເອງສໍາເລັດການເຮັດບໍ່ແຮ່, ຕົນເອງຕ້ອງປະສະພາບແວດລ້ອມທີ່ໄດ້ຮັບການປົກປ້ອງເອົາໄວ້ເບື້ອງຫຼັງ ແລະ ຊຸມຊົນທີ່ໄດ້ຮັບການສ້າງອໍານາດໄວ້."
>
> - ທ່ານ Duma Nkosi, ກອງປະຊຸມສຸດຍອດຂອງໂລກກ່ຽວກັບການພັດທະນາທີ່ຍືນຍົງ, ທີ່ Johannesburg, 2002.

ໄລຍະບໍ່ດົນມານີ້ ໄດ້ມີໂຄງການໜຶ່ງ ເພື່ອສ້າງຄວາມຮູ້ກ່ຽວກັບ SEA ຢູ່ໃນ ສປປ ລາວ ໂດຍ ໄດ້ເນັ້ນ ກ່ຽວກັບຂະແໜງການບໍ່ແຮ່ ໂດຍ ໄດ້ໃຫ້ຄໍາເຫັນແນະນໍາຫຼາຍອັນໄວ້ຢູ່ໃນຕອນທ້າຍບົດລາຍງານນີ້ (ເບິ່ງໃນ Box 1). ນອກເໜືອຈາກ SEA ແລ້ວ, ການວາງແຜນໃນລະດັບຂົງເຂດ ຫຼື ລະດັບພື້ນທີ່ພູມສັນຖານທີ່ປິ່ນອ້ອມບັນດາໂຄງການບໍ່ແຮ່ຍັງມີຄວາມຈໍາເປັນອີກດ້ວຍ. ການວາງແຜນທີ່ຈະເຮັດໃຫ້ໂຄງການບໍ່ແຮ່ເຊື່ອມໂຍງເຂົ້າກັບເສດຖະກິດ ແລະ ສິ່ງແວດລ້ອມ ທ້ອງຖິ່ນໄປພ້ອມກັບການເຂົ້າເຖິງພະລັງງານ, ພື້ນຖານໂຄງລ່າງ ແລະ ຕະຫຼາດສາມາດຊ່ວຍຮັບ ປະກັນມູນມັງທາງດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມທີ່ເປັນທາງບວກໄລຍະຍາວໄດ້ຫຼາຍຂຶ້ນ. ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນການຄຸ້ມຄອງ.

***ການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນການເພື່ອຄຸ້ມຄອງຜົນກະທົບເຫຼົ່ານີ້ ແມ່ນປະຈຸບັນໄດ້ຖືກພິຈາລະນາເປັນມາດຕະຖານການປະຕິບັດອັນດີທີ່ສຸດສໍາລັບໂຄງການລົງທຶນຕ່າງໆຢູ່ໃນທຸກຂະແໜງການ.***
ສປປ ລາວ ມີກອບກົດລະບຽບທີ່ຂ້ອນຂ້າງຈະຮັດກຸມກ່ຽວກັບເລື່ອງນີ້. ກົດລະບຽບການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ (EIA)(ເລກທີ.1770/STEA) ໄດ້ຮັບການຮັບຮອງໃນປີ 2000, ເຊິ່ງໄດ້ກໍານົດທິດທາງສໍາລັບການປະເມີນທາງດ້ານສິ່ງແວດລ້ອມ ແລະ ກອບວຽກສໍາລັບກະຊວງອື່ນໆເພື່ອພັດທະນາມາດຕະຖານຂອງຕົນເອງຕໍ່ກັບຂັ້ນຕອນດໍາເນີນການຕ່າງໆຂອງ EIA. ຢູ່ໃນຂັ້ນສູນກາງ, ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ (WREA) ມີຄວາມຮັບຜິດຊອບຕໍ່ກັບ ESIAs, ລວມທັງການປະສານງານກັບກົມອື່ນໆ ເຮັດການທົບທວນ ແລະ ອະນຸມັດກ່ຽວກັບ ESIAs ແລະ ມີບົດບາດໃນການຕິດຕາມການປະຕິບັດຕາມ.ດໍາລັດກ່ຽວກັບການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ຂອງ ສປປ ລາວ ແມ່ນໄດ້ປະກາດນໍາໃຊ້ຈາກສໍານັກງານນາຍົກລັດ ຖະມົນຕີໃນເດືອນກຸມພາ 2010. ເຖິງແນວໃດກໍ່ຕາມ, ການບັງຄັບໃຊ້ ESIA ຍັງມີຄວາມບໍ່ສະໝໍ່າສະເໝີຢູ່ໃນ ສປປ ລາວ ແລະ ຄວາມສາມາດໃນການຕິດຕາມການລົງທຶນແມ່ນຍັງຂາດເຂີນຢູ່.ບັນຫາອີກອັນໜຶ່ງ ແມ່ນການຕົກລົງເຫັນດີໃນດ້ານຫຼັກການຕໍ່ກັບບົດສະເໜີການລົງທຶນແມ່ນມີບາງຄັ້ງຕົກລົງກັນຢູ່ໃນລະດັບສູງ(ເຊັ່ນ:ໂດຍທາງຜູ້ບໍລິຫານຂັ້ນສູນກາງ ຫຼື ຂັ້ນແຂວງ) ກ່ອນທີ່ຈະເຮັດ ESIAs, ເຊິ່ງເຮັດໃຫ້ ມີຄວາມລໍາບາກທີ່ທາງເຈົ້າໜ້າທີ່ຂອງລັດຈະໃຫ້ການປະຕິເສດຕໍ່ການສະເໜີໂຄງການ ຫຼັງຈາກ ນັ້ນ. ການກັ່ນກອງເພື່ອຄັດເລືອກໂຄງການລົງທຶນ ໂດຍໃຊ້ ESIAs ແລະ ການ ໃຫ້ຈັດຕັ້ງປະຕິບັດ ESMPs ຢ່າງຄົບຖ້ວນ ແມ່ນເປັນຂັ້ນຕອນພື້ນຖານ ແລະ ສໍາຄັນທີ່ສຸດໃນການທີ່ຈະຮັບປະກັນວ່າໂຄງການລົງທຶນນັ້ນຈະສາມາດນໍາຜົນປະໂຫຍດການພັດທະນາທີ່ຍືນຍົງມາໃຫ້. ຜູ້ລົງທຶນສາມາດສະໜອງຕອບຕໍ່ຄວາມພະຍາຍາມໃນການປັບປຸງການບັງຄັບໃຊ້ ESIA ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ດ້ວຍການດໍາເນີນການສຶກສາ ESIA ທີ່ມີຄຸນນະພາບ ທີ່ຕ້ອງໃຫ້ທຸກ ໂຄງການບໍ່ແຮ່ປະຕິບັດຕາມຂໍ້ຮຽກຮ້ອງໃນລະດັບດຽວກັນ ທັງໃຫ້ຮັບປະກັນວ່າແຜນຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMPs) ໄດ້ຮັບການຈັດຕັ້ງປະ ຕິບັດຢ່າງເຕັມສ່ວນ.

***ເງິນມັດຈໍາໃນການປະຕິບັດ.*** ເງິນມັດຈໍາການປະຕິບັດທາງດ້ານສິ່ງແວດລ້ອມແມ່ນໄດ້ຖືກນໍາໃຊ້ຢູ່ໃນຂະແໜງການຂຸດຄົ້ນຊັບພະຍາກອນຢູ່ໃນປະເທດຕ່າງໆໃນທົ່ວໂລກມາໄດ້ໄລຍະໜຶ່ງແລ້ວ. ພວກມັນໄດ້ຮັບການກໍານົດເປັນ "ການຝາກເງິນມັດຈໍາທີ່ທາງຜູ້ເຮັດໃຫ້ເກີດມົນລະພິດ ແລະ ຜູ້ລະເມີດມາດຕະຖານທາງດ້ານສິ່ງແວດລ້ອມຈະຕ້ອງຈ່າຍເງິນປົວແປງດ້ານສິ່ງແວດລ້ອມທີ່ແນ່ນອນ. ເງິນມັດຈໍາເຫຼົ່ານີ້ ແມ່ນໄດ້ມຸ່ງໝາຍເພື່ອສ້າງແຮງຈູງໃຈທາງດ້ານການເງິນໃຫ້ກັບອຸດສາຫະກໍາ ເພື່ອໃຫ້ຍຶດໝັ້ນຕໍ່ ພັນທະທາງດ້ານສິ່ງແວດລ້ອມ"[14]. ຢູ່ໃນຂະແໜງບໍ່ແຮ່, ໂດຍທົ່ວໄປແລ້ວ ເງິນມັດຈໍາໃນການປະຕິບັດແມ່ນຖືກຮຽກຮ້ອງເພື່ອໃຫ້ຮັບປະກັນໄດ້ກ່ຽວກັບຄ່າໃຊ້ຈ່າຍການປົວແປງຄວາມເສຍຫາຍທາງດ້ານສະພາບແວດລ້ອມທີ່ອາດຈະເກີດຂຶ້ນມາຈາກການດໍາເນີນການ ແລະ ການຟື້ນຟູສະພາບແວດລ້ອມຫຼັງຈາກສິ້ນສຸດໂຄງ ການ. ມີຄວາມຈໍາເປັນຢ່າງຍິ່ງໃນການ ໃຫ້ໂຄງການຕ່າງໆທີ່ອາດຈະ ສ້າງຜົນກະທົບ ທາງດ້ານສິ່ງແວດລ້ອມ ຕ້ອງລົງທະບຽນ, ແລະ ພ້ອມນັ້ນ ໃຫ້ລັດຖະບານ ມີອໍານາດ ຮຽກຮ້ອງເງິນມັດຈໍາໃນການດໍາເນີນງານ ແລະ ສາມາດຍຶດເອົາເງິນມັດຈໍານັ້ນໃນກໍລະ ນີມີການລະເມີດ[15]. MEPAs ຢູ່ໃນ ສປປ ລາວ ຕ້ອງການໃຫ້ຜູ້ດໍາເນີນການທາງດ້ານບໍ່ແຮ່ສົ່ງ ESMPs ແລະເງິນມັດຈໍາໃນການຮັບປະກັນຄຸນະພາບທາງດ້ານສິ່ງແວດລ້ອມຄື: ກ່ອນທີ່ຈະປິດໂຄງການ, ລັດຖະບານລາວຈະກວດກາເບິ່ງບໍ່ແຮ່ ແລະ ເບິ່ງວ່າຖ້າມີການລະເມີດ ESMP ແມ່ນເງິນມັດຈໍາຈະຖືກຍຶດ[16] (ເບິ່ງເພີ່ມເຕີມໃນມາດຕາ 42 ຂອງກົດໝາຍແຮ່ທາດສະບັບກ່ອນ). ເຖິງແນວໃດກໍ່ຕາມ, ເງິນມັດຈໍາໃນການປະຕິບັດ ແລະ ຄວາມຕ້ອງການດ້ານການຮັບປະກັນອາດຈະມີປະສິດທິພາບຫຼາຍຂຶ້ນຖ້າບໍລິສັດບໍ່ນໍາສົ່ງແຜນ ESMP ໃນເວລາດໍາເນີນການຂອງຕົນເອງເຊັ່ນດຽວກັບຄ່າໃຊ້ຈ່າຍທີ່ຮັບ ຜິດຊອບເລື່ອງການເກີດມີບັນຫາ ແລະ ການຟື້ນຟູດ້ານສິ່ງແວດລ້ອມ. ຍັງມີຄວາມຈໍາເປັນທີ່ເງິນມັດຈໍາບໍລິສັດຕ້ອງຈ່າຍນັ້ນມີຄວາມພຽງພໍທີ່ຈະປົວແປງຄວາມເສຍຫາຍຕໍ່ທາງດ້ານສິ່ງແວດລ້ອມ ແລະ ຄວາມເສຍຫາຍອື່ນໆ. ຕົວຢ່າງ, ໃນການປະເມີນທາງດ້ານ "ລາຄາ" ທີ່ເໝາະສົມຂອງເສດຖະກິດ-ສິ່ງແວດລ້ອມຕໍ່ກັບຄວາມເສຍຫາຍທີ່ເປັນໄປໄດ້ນັ້ນສາມາດຊ່ວຍລັດຖະບານໃນການເຈລະຈາຕໍ່ລອງກັບບໍລິສັດບໍ່ແຮ່ ແລະຄວາມສ່ຽງຕໍ່ກັບການສູນເສຍເງິນມັດຈໍານັ້ນ ອາດຈະເປັນການກະຕຸກຊຸກຍູ້ໃຫ້ບໍລິສັດຮັບປະກັນເລື່ອງການປະຕິບັດທາງດ້ານສິ່ງແວດລ້ອມທີ່ດີຂຶ້ນ.

***ການປັງປຸງສິ່ງຕົກຖອດ ພາຍຫຼັງການຂຸດຄົ້ນບໍ່ແຮ່.*** ດັ່ງທີ່ທາງທ່ານໂຣເບີສັນ (Robertson) ໄດ້ໃຫ້ຂໍ້ສັງເກດໄວ້ນັ້ນ, ການດໍາເນີນກິດຈະການດ້ານບໍ່ແຮ່ແມ່ນເປັນພຽງແຕ່ການສືບຕໍ່ການນໍາໃຊ້ທີ່ດິນຕອນໜຶ່ງເທົ່ານັ້ນ ແລະ ບໍລິສັດບໍ່ແຮ່

---

[14] UNEP/UNDP/DUTCH ໂຄງການຮ່ວມກ່ຽວກັບກົດໝາຍສະພາບແວດລ້ອມ ແລະສະຖາບັນຢູ່ໃນອາຟຣິກາ, ອ້າງອີງຢູ່ໃນ ADB, "ເງິນມັດຈໍາການດໍາເນີນການດ້ານສິ່ງແວດລ້ອມ" (http://www.adb.org/water/topics/dams/dams0915-15.asp)

[15] ADB, "ເງິນມັດຈໍາການດໍາເນີນການດ້ານສິ່ງແວດລ້ອມ".

[16] ບໍລິສັດທີ່ປຶກສາແສງແກ້ວ ກິ່ງສະດາ ຈໍາກັດ. 2006. "ການສົ່ງອອກແຮ່ທາດ: ການປະກອບສ່ວນຕໍ່ການພັດທະນາລາວ". *ເອກະສານພື້ນຖານວິຊາການເພື່ອບົດລາຍງານການພັດທນາຊັບພະຍາກອນມະນຸດແຫ່ງຊາດຄັ້ງທີ3 ສປປ ລາວ.*

ກໍເປັນໜຶ່ງໃນຈຳນວນຜູ້ ທີ່ມາຄອບຄອງທີ່ດິນ ນັ້ນ[17]. ມັນຈຳເປັນຕ້ອງມີການວາງແຜນທີ່ຮັດກຸມ ເພື່ອຫຼຸດຜ່ອນຜົນກະທົບທາງລົບໃນຊົ່ວອາຍຸຂອງໂຄງການ ແລະຮັບປະກັນວ່າມັນຍັງມີ ສິ່ງຕົກຖອດທາງບວກທີ່ຕາມມາ ເຫຼືອໄວ້ໃຫ້ກັບຊຸມຊົນເຈົ້າພາບໃນພື້ນທີ່. ການຂຸດຄົ້ນຊັບພະຍາກອນບໍ່ແຮ່ມີປະຫວັດທີ່ບໍ່ດີໃນການປະກອບ ສ່ວນເຂົ້າໃນການເຕີບໂຕຂອງເສດຖະກິດ ແລະການຫຼຸດຜ່ອນຄວາມທຸກຍາກ, ແມ້ແຕ່ ໃນກໍລະນີທີ່ມີຢູ່ໃນລະດັບທີ່ຂ້ອນຂ້າງສູງກໍຕາມ, ດັ່ງທີ່ມີຫຼັກຖານສະແດງອອກໃນກໍລະນີຂອງ "ການຕຳໜິທາງດ້ານຊັບພະຍາກອນ" ໃນອຸດສາຫະກຳ ຂຸດຄົ້ນໃນບັນດາປະເທດກຳລັງພັດທະນາ. ບ່ອນໃດທີ່ບໍລິສັດໄດ້ປະກອບສ່ວນຕໍ່ກິດຈະກຳການພັດທະນາຊຸມຊົນນັ້ນ, ສິ່ງເຫຼົ່ານີ້ຈະມີປະສິດທິພາບຫຼາຍຂຶ້ນຖ້າພວກມັນສ້າງໃຫ້ເກີດມີການເຕີບໂຕໃນໄລຍະຍາວ ແລະໃຫ້ໂອກາດທາງດ້ານວິສາຫະກິດ ແລະ ປັບປຸງຊີວິດການເປັນຢູ່ທີ່ພົ້ນ ໄລຍະອາຍຸການຂອງບໍ່ແຮ່ນັ້ນ, ຕົວຢ່າງ: ການສ້າງໂຮງຮຽນ ຫຼືໂຮງໝໍ (ເຊິ່ງຕົວຈິງ ແມ່ນຢູ່ໃນຂອບເຂດຮັບຜິດຊອບຂອງລັດຖະບານ) ບໍ່ສາມາດ ທົດແທນ ການມີສ່ວນຮ່ວມຂອງຊຸມຊົນພ້ອມທັງ ຄວາມພະຍາຍາມອັນຈິງຈັງ ໃນການຫຼຸດຜ່ອນຜົນກະທົບທາງລົບຂອງການດຳເນີນກິດຈະການບໍ່ແຮ່[18]. ແຜນການປິດບໍ່ແຮ່ ແລະ ການຟື້ນຟູສະຖານທີ່ໂຄງການກໍແມ່ນສິ່ງທີ່ຈຳເປັນ ຢ່າງຍິ່ງ. ການຟື້ນຟູເພື່ອໃຫ້ບັນລຸ "ເງື່ອນໄຂສະເພາະ" ແມ່ນເປັນພັນທະ ຕາມທີ່ລະບຸຢູ່ໃນກົດໝາຍແຮ່ທາດ 2008 (ມາດຕາ 27, ມາດຕາ 60) ແລະ ການວາງແຜນການຟື້ນຟູການປິດບໍ່ ໄດ້ກາຍເປັນຄຸນລັກສະນະມາດຕະຖານ ຂອງອຸດສາຫະກຳບໍ່ແຮ່ໃນທົ່ວໂລກໄປ ແລ້ວ. ເຖິງແນວໃດກໍ່ຕາມ, ຂະບວນການທີ່ຈະບັນລຸການເຮັດ ແຜນການປິດບໍ່ແຮ່ ແລະການຟື້ນຟູຈະບັນລຸໄດ້ແນວໃດ, ເຊັ່ນດຽວກັບຄຸນະພາບຂອງແຜນການເຫຼົ່ານີ້ ແມ່ນເປັນສ່ວນສຳຄັນໃນດ້ານຄວາມຕ້ອງການຕາມກົດໝາຍ ເພື່ອກະກຽມຂະບວນການນີ້. ເລື່ອງນີ້ແມ່ນຮຽກຮ້ອງການມີສ່ວນຮ່ວມຂອງພາກ ສ່ວນກ່ຽວຂ້ອງຢ່າງເຕັມທີ່ໃນການສ້າງແຜນການປິດບໍ່ແຮ່ຈາກຂັ້ນຕອນເລີ່ມຕົ້ນຂອງໂຄງການຄື: ຕົວຢ່າງ, ຖ້າແຜນການຮຽກຮ້ອງໃຫ້ມີການຟື້ນຟູປ່າ, ການດຳເນີນການຕໍ່ມາ ແມ່ນຈະຕ້ອງໄດ້ຮັບການອອກແບບກັບເປົ້າໝາຍທີ່ມີຢູ່ໃນໃຈແລ້ວ. ມາດຕະການນະໂຍບາຍອັນໜຶ່ງທີ່ຈະຊ່ວຍຫຼຸດ ຜ່ອນຜົນກະທົບທາງດ້ານ"ການສາບແຊ່ງທາງດ້ານຊັບພະຍາກອນ"[19] ແມ່ນເປັນສ່ວນການລົງທຶນໃນດ້ານລາຍຮັບໃໝ່ຈາກອຸດສາຫະກຳການຂຸດຄົ້ນຊັບພະຍາ ກອນ (ເຊັ່ນການຂຸດຄົ້ນບໍ່ແຮ່) ເຂົ້າສູ່ການພັດທະນາຂະແໜງທີ່ບໍ່ກ່ຽວກັບຊັບພະຍາກອນ ເພື່ອສ້າງຄວາມຫຼາກຫຼາຍທາງດ້ານໂຄງສ້າງເສດຖະກິດແຫ່ງຊາດ ແລະ ສ້າງທຶນຮອນທາງດ້ານສັງຄົມ.

**ການປັບປຸງບັນຍາກາດການລົງທຶນ.** ເປັນສິ່ງສຳຄັນທີ່ຈະຕ້ອງໄດ້ອອກແບບທາງເລືອກດ້ານນະໂຍບາຍ ເພື່ອດຶງດູດການລົງທຶນທີ່ສ້າງບັນຍາກາດທີ່ດີໃຫ້ແກ່ ບໍລິສັດບໍ່ແຮ່ ທີ່ມີຄວາມຮັບຜິດຊອບດ້ວຍການມີຂໍ້ຜູກພັນຕໍ່ກັບຄວາມຍືນຍົງ. ດັ່ງທີ່ໄດ້ກ່າວມາແລ້ວນັ້ນ, ກິດຈະການດ້ານບໍ່ແຮ່ແມ່ນເປັນການລົງທຶນທີ່ມີຄວາມສ່ຽງຕໍ່ກັບຜູ້ລົງທຶນ, ລັດຖະບານ ແລະ ຊຸມຊົນ. ມັນ ເປັນຜົນປະໂຫຍດຂອງລັດຖະບານ ເຈົ້າພາບໃນການດຶງດູດຜູ້ລົງທຶນທີ່ສາມາດຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ທາງດ້ານເສດຖະກິດ,ສັງຄົມ ແລະ ສິ່ງແວດລ້ອມດີທີ່ສຸດທີ່ກ່ຽວຂ້ອງກັບການຂຸດຄົ້ນບໍ່ແຮ່. ສຳລັບບໍລິສັດບໍ່ແຮ່ທີ່ມີພື້ນຖານດີ,ຖ້າວ່າບ່ອນໃດເງື່ອນໄຂການປະຕິບັດຫາກບໍ່ມີຄວາມເທົ່າທຽມກັນ ເຊິ່ງ ບໍ່ມີການບັງຄັບໃຊ້ບັນດາລະບຽບກົດໝາຍ ແລະ ຂໍ້ກຳນົດຕ່າງໆ ກັບຜູ້ດຳເນີນກິດຈະການທຸກຄົນເໝືອນກັນກໍຈະລວມ ເປັນຄວາມສ່ຽງເພີ້ມເຕີມ. ຄວາມຊັດເຈນກ່ຽວກັບກົດລະບຽບ ແລະມາດຕະຖານທີ່ຈະຖືກບັງຄັບໃຊ້ກັບຜູ້ລົງທຶນ ກໍເປັນສິ່ງສຳຄັນທີ່ສຸດເໝືອນກັນ ເຊັ່ນ: ການສຶກສາ ກ່ຽວກັບວິສາຫະກິດການລົງທຶນຕ່າງ ປະເທດຢູ່ໃນອຸດສາຫະກຳບໍ່ແຮ່ຂອງຫວຽດນາມພົບວ່າ "ສະພາບແວດລ້ອມການລົງທຶນທີ່ເທົ່າທຽມກັນ ແລະ ມີຄວາມໂປ່ງໃສ ແລະ ການບັງຄັບໃຊ້ລະບົບກົດໝາຍ ເປັນປັດໃຈອັນສຳຄັນທີ່ສຸດຕໍ່ກັບນັກລົງທຶນຢູ່ໃນການຕັດສິນໃຈການລົງທຶນຂອງເຂົາເຈົ້າ"[20]. ຜູ້ລົງທຶນ ແລະ ດຳເນີນກິດຈະການສາມາດດຳເນີນວຽກງານໃຫ້ມີຄວາມເຂົ້າໃຈດີຂື້ນກ່ຽວກັບລະ ບຽບກົດໝາຍ ແລະ ມາດຕະຖານ ທີ່ກ່ຽວຂ້ອງກັບໂຄງການ

*Box 2. ການຕຳໜິ ຫຼື ການໃຫ້ພອນ? ການລິເລີ່ມການໃຫ້ຊັບພະຍາກອນຂອງ ICMM*

ການຄົ້ນຄວ້າໂດຍທາງໂຄງການລິເລີ່ມການໃຫ້ຊັບພະຍາກອນຂອງ ICMM ໄດ້ຊີ້ໃຫ້ເຫັນວ່າການດຳເນີນບໍ່ແຮ່ຂະໜາດໃຫຍ່ສາມາດຊ່ວຍໃຫ້ປະເທດມີລາຍຮັບຕ່ຳໄດ້ຮັບການເຕີບໂຕທາງດ້ານເສດຖະກິດທີ່ສຳຄັນ ແລະ ບາງຄັ້ງຕາມທີ່ຈຳເປັນທີ່ສຸດ, ຊ່ວຍໃຫ້ເຂົາເຈົ້າຫຼຸດຜ່ອນຄວາມທຸກຍາກ ແລະ ເຂົ້າຮ່ວມໃນເສດຖະກິດໂລກໄດ້ໃໝ່ອີກ. ຢູ່ໃນບັນດາປະເທດເຫຼົ່ານັ້ນ ໃນບ່ອນທີ່ບໍ່ສາມາດບັນລຸໄດ້ເຖິງຜົນໄດ້ຮັບທາງບວກນັ້ນ, ການປະຕິຮູບເພື່ອສ້າງຄວາມເຂັ້ມແຂງການປົກຄອງຂອງພາກລັດ, ບໍ່ວ່າຈະຢູ່ໃນຂັ້ນສູນກາງ ຫຼື ລະດັບພາກກໍ່ຕາມ, ອາດຈະເປັນກຸນແຈສຳຄັນຕໍ່ກັບຄວາມກ້າວໜ້າ. ບັນດາບໍລິສດັສາມາດປະກອບສ່ວນເພື່ອແກ້ໄຂຊ່ອງຫວ່າງການປົກຄອງດັ່ງກ່າວຜ່ານການເຂົ້າໄປມີສ່ວນຮ່ວມໃນການເປັນຫຸ້ນສ່ວນກັບຫຼາຍພາກສ່ວນທີ່ກ່ຽວຂ້ອງ.

ການວິເຄາະການລິເລີ່ມການໃຫ້ຊັບພະຍາກອນຂອງ 33 ບໍລິສັດທີ່ບໍ່ເປັນເອກະລາດຕໍ່ກັນທາງດ້ານແຮ່ທາດທີ່ໄດ້ເຮັດຢູ່ໃນປີ 2004 ສະແດງໃຫ້ເຫັນວ່າ ໃນຂະນະທີ່ປະມານເຄິ່ງໜຶ່ງໄດ້ມີຜົນສຳເລັດອັນກວ້າງຂາງ ເມື່ອປະເມີນທຽບກັບຕົວວັດແທກທາງດ້ານເສດຖະກິດ-ສັງຄົມ ທີ່ອີກເຄິ່ງໜຶ່ງແມ່ນບໍ່ປະຕິບັດໄດ້ດີເລີຍ, ໂດຍທີ່ມີຫຼາຍປະເທດຂອງຈຳນວນເຫຼົ່ານີ້ນັ້ນປະສົບກັບບັນຫາທີ່ພົວ ພັນກັບ 'ການຕຳໜິທາງດ້ານຊັບພະຍາກອນ. ການຮຽກຮ້ອງນີ້ແມ່ນສຳລັບຄວາມພະຍາຍາມອັນຍິ່ງໃຫຍ່ທີ່ຈະນຳໃຊ້ປັດໃຈຄວາມສຳເລັດທີ່ໄດ້ພິສູດແລ້ວນັ້ນເປັນການລົງທຶນທາງດ້ານບໍ່ແຮ່ໃນນັ້ນ.

ການຄົ້ນຄວ້າຊີ້ໃຫ້ເຫັນວ່າ ຕົວກຳນົດອັນສຳຄັນຂອງການເຮັດບໍ່ແຮ່ຈະປະກອບສ່ວນເຂົ້າໃນການເຕີບໂຕຂອງເສດຖະກິດ ແລະ ການຫຼຸດຜ່ອນຄວາມທຸກຍາກແມ່ນກອບການປົກຄອງໂດຍລວມ ຢູ່ທັງໃນບໍລິສັດ ແລະອານາເຂດປະເທດ. ສິ່ງທີ່ທາງໂຄງການລິເລີ່ມການໃຫ້ຊັບພະຍາກອນຊີ້ໃຫ້ເຫັນຄວາມສຳ ຄັນຂອງການຄຸ້ມຄອງຂະແໜງການລັດທີ່ດີໂດຍທາງບລັດຖະບານຢູ່ໃນຂັ້ນສູນກາງ ແລະ ພາກພື້ນ. ການເປັນຫຸ້ນສ່ວນລະຫວ່າງບໍລິສັດ, ລັດຖະບານ ແລະອົງການພັດທະນາ ແລະອົງການຈັດຕັ້ງທາງສັງຄົມສາມາດຊ່ວຍເພີ່ມຄວາມສາມາດ ແລະ ອັດຊ່ອງຫວ່າງໃນບ່ອນທີ່ຈຳເປັນ ແລະ ສາມາດ ຊ່ວຍຂະຫຍາຍ, ເປີດກວ້າງ ແລະ ລົງເລິກການປະກອບ ສ່ວນອັນສຳຄັນທາງດ້ານເສດຖະກິດ-ສັງຄົມ ຈາກການລົງທຶນໃນບໍ່ແຮ່ ແລະ ໂລຫະ.

(ແຫຼ່ງຂໍ້ມູນ: ສະພາສາກົນກ່ຽວກັບບໍ່ແຮ່ ແລະ ໂລຫະ, ICMM. 2010. ການບໍ່ແຮ່: ຫຸ້ນສ່ວນເພື່ອການພັດທະນາ. ບົດລາຍງານໃນຈຸດຢືນ)

[17] URS Australia. 2004. "ຜົນຕອບແທນທາງດ້ານສິ່ງແວດລ້ອມ, ສັງຄົມ ແລະເສດຖະກິດອັນສຳຄັນໃນການດຳເນີນການ ແລະການປິດບໍ່ແຮ່ທີ່ຍືນຍົງ". ກອງປະຊຸມກຸ່ມການຄຸ້ມຄອງສະພາບແວດລ້ອມກຸ່ມສະໜາມກອັຟ, ພຶດສະພາ 2004, Kalgoorlie.

[18] Oxfam Australia, 2010.

[19] 'ການຕຳໜິທາງດ້ານຊັບພະຍາກອນ' ໝາຍເຖິງແນວໂນ້ມຂອງບັນດາປະເທດທີ່ມີຊັບພະຍາກອນທຳມະຊາດອຸດົມສົມບູນທີ່ປະຕິບັດຕົວຊີ້ບອກທາງດ້ານການພັດທະນາບໍ່ໄດ້ດີຄືກັບບັນດາປະເທດທີ່ມີຊັບພະຍາກອນທຳມະຊາດໜ້ອຍກວ່າ.

[20] Vu Xuan Nguyet Hong, Ngo Minh Tuan ແລະ Ho Cong Hoa. 2009. *ຜົນກະທົບການພັດທະນາຍືນຍົງຂອງສິ່ງຈູງໃຈການລົງທຶນ: ກໍລະນີສຶກສາຂອງອຸດສາຫະກຳບໍ່ແຮ່ຢູ່ໃນຫວຽດນາມ.* ສະຖາບັນການພັດທະນາຍືນຍົງນາໆຊາດ.

ຂອງພວກເຂົາ ທັງປັບປຸງຄວາມສາມາດຂອງຕົນ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ມາດຕະຖານເຫຼົ່ານັ້ນ. ນອກຈາກນັ້ນ, ດັ່ງການສຶກສາທີ່ປະເທດຫວຽດນາມໄດ້ສະແດງໃຫ້ເຫັນ, ດ້ວຍການໃຫ້ສິ່ງຈູງໃຈ ເພື່ອດຶງດູດການລົງທຶນໃນຂະແໜງບໍ່ແຮ່ ເຊັ່ນ: ການສະໜອງໄຟຟ້າໃຫ້ໃນລາຄາຖືກ ແລະ ການຜ່ອນຜັນທາງດ້ານພາສີບໍ່ແມ່ນສິ່ງທີ່ຄາດຫວັງຕົ້ນຕໍຂອງບໍລິສັດ, ສິ່ງຈູງໃຈເຫຼົ່ານີ້ອາດຕ້ອງໄດ້ຮັບການປະຕິຮູບ ຫຼື ລົບລ້າງ. ແທນທີ່ຈະເຊື່ອມໂຍງສິ່ງຈູງໃຈ ເຂົ້າກັບຂົງເຂດທາງດ້ານພູມສາດ ຫຼືຂະແໜງການແບບງ່າຍໆ, ມັນສາມາດໃຫ້ເຊື່ອມໂຍງ ກັບຄວາມຍືນຍົງ ຫຼື ການປະຕິບັດງານທີ່ດີ.

***ມາດຕະຖານສາກົນ ແລະ ບົດແນະນຳຕ່າງໆ.*** ມີ ມາດຕະຖານ, ບົດແນະນຳ ແລະ ພິທີການຕ່າງໆຫລາຍຢ່າງສຳລັບການປັບປຸງການຄຸ້ມຄອງ ແລະ ການປະຕິບັດໃນກິດຈະກຳຂະແໜງບໍ່ແຮ່ ແລະ ການຂຸດຄົ້ນຊັບພະຍາກອນຢ່າງກ້ວາງຂວາງ ຍິ່ງຂຶ້ນ. ສິ່ງເຫຼົ່ານີ້ປະກອບໄປດ້ວຍມາດຕະຖານທົ່ວໄປ ເຊັ່ນ: ຂໍ້ຕົກລົງສັນຍາທົ່ວໂລກຂອງສະຫະປະຊາຊາດ, ເປັນນະໂຍບາຍລິເລີ່ມຕໍ່ກັບທຸລະກິດຜູ້ທີ່ມີຄຳໝັ້ນສັນຍາທີ່ຈະປະຕິບັດການດຳເນີນງານຂອງເຂົາເຈົ້າຕາມສິບຫຼັກການທົ່ວໄປ ຢູ່ໃນຂົງເຂດສິດທິມະນຸດ, ແຮງງານ, ສິ່ງແວດລ້ອມ ແລະ ການຕ້ານການສໍ້ລາດ

ບັງຫຼວງ. ມາດຕະຖານອຸດສາຫະກຳກໍ່ຍັງມີຢູ່ ເຊັ່ນ: ບັນດາມາດຕະຖານທີ່ໄດ້ສ້າງຂຶ້ນມາໂດຍທາງສະພາສາກົນກ່ຽວກັບບໍ່ແຮ່ ແລະ ໂລຫະ (ICMM), ຜູ້ເຊິ່ງມີສະມາຊິກຕ້ອງມຸ່ງໝັ້ນສັນຍາຕໍ່ການວັດແທກການປະຕິບັດຂອງຕົນເອງ ຕໍ່ກັບສິບຫຼັກການຕົ້ນຕໍເພື່ອຄວາມຍືນຍົງໃນການຂຸດຄົ້ນບໍ່ແຮ່ (ເບິ່ງໃນ Box 2). ມາດຕະຖານທາງດ້ານການເງິນ ເຊັ່ນ: ຫຼັກການແບ່ງເປັນສອງພາກ (Equator Principles) ແລະ ນະໂຍບາຍການກູ້ຢືມສະເພາະທີ່ທາງທະນາຄານສ້າງຂຶ້ນມາ ແມ່ນຍັງຖືກນຳໃຊ້ ເພື່ອກຳນົດວ່າໂຄງການຂຸດຄົ້ນບໍ່ແຮ່ມີສິດຕໍ່ກັບ ການສະໜອງເງິນດັ່ງກ່າວຫຼືບໍ່. ມັນຍັງເປັນໄປໄດ້ອີກທີ່ຈະຮຽກຮ້ອງໃຫ້ມີການຮັບ ຮອງເອົາກົດລະບຽບການປະພຶດຢູ່ໃນຂົງເຂດທີ່ເປັນຫ່ວງ ໂດຍສະເພາະ ເຊັ່ນ: ກົດລະບຽບການຄຸ້ມຄອງສານໄຊຍານາຍສາກົນ. ຢູ່ໃນຂັ້ນສູງ, ລັດຖະບານລາວອາດຈະພິຈາລະນາຜົນປະໂຫຍດການເຂົ້າຮ່ວມໃນໂຄງການລິເລີ່ມຄວາມໂປ່ງໃສທາງດ້ານອຸດສາຫະກຳການຂຸດຄົ້ນ (EITI). ເປີດໃຫ້ກັບທັງປະເທດ ແລະ ບໍລິສັດ, EITI ຮຽກຮ້ອງໃຫ້ທຸກການຊຳລະ ແລະ ລາຍຮັບທີ່ມີຢູ່ໃນຂະແໜງນ້ຳມັນ, ແກ໊ສ ແລະ ບໍ່ແຮ່ນັ້ນມີການເປີດເຜີຍຕໍ່ສາທາລະນະ ແລະ ໄດ້ຮັບການກວດສອບ. ອີງຕາມ EITI,ຜົນປະໂຫຍດ*ຂອງການເຂົ້າຮ່ວມໄດ້ແກ່*ຜົນປະໂຫຍດສຳລັບບັນດາປະເທດທີ່ດຳເນີນການຈັດຕັ້ງປະຕິບັດ ປະກອບດ້ວຍບັນຍາກາດການລົງທຶນທີ່ໄດ້ຮັບການປັບປຸງໂດຍ ການໃຫ້ສັນຍານອັນຊັດເຈນກັບຜູ້ລົງທຶນ ແລະ ສະຖາບັນການເງິນສາກົນທີ່ລັດຖະບານມີຄຳໝັ້ນສັນຍາສູງຕໍ່ກັບເລື່ອງຄວາມໂປ່ງໃສ. EITI ຍັງຊ່ວຍໃນການສ້າງຄວາມເຂັ້ມແຂງດ້ານຄວາມຮັບຜິດຊອບ ແລະ ການປົກຄອງທີ່ດີ,ເຊັ່ນດຽວກັບການສົ່ງເສີມເສດຖະກິດທີ່ຍິ່ງໃຫຍ່ກວ່າ ແລະ ຄວາມໝັ້ນຄົງທາງດ້ານການເມືອງ. ໃນທາງກົງກັນຂ້າມ, ອັນນີ້ສາມາດປະກອບສ່ວນເຂົ້າໃນການປ້ອງກັນຄວາມຂັດແຍ້ງ. ຜົນປະໂຫຍດຕໍ່ກັບບໍລິສັດ ແລະ ບັນດາຜູ້ລົງທຶນຕັ້ງຢູ່ໃນການຫຼຸດ ຜ່ອນຄວາມສ່ຽງທາງດ້ານການເມືອງ ແລະ ຊື່ສຽງ.ຄວາມບໍ່ໝັ້ນຄົງທາງດ້ານການເມືອງທີ່ເກີດມາຈາກການປົກຄອງທີ່ບໍ່ໂປ່ງໃສເປັນໄພຂົ່ມຂູ່ອັນຊັດເຈນຕໍ່ກັບການລົງທຶນ. ຢູ່ໃນອຸດສາຫະກຳການລົງທຶນ ບ່ອນທີ່ການລົງທຶນແມ່ນສຸມໃສ່ທຶນຮອນ ແລະ ຂຶ້ນກັບສະຖຽນລະພາບໃນໄລຍະຍາວເພື່ອສ້າງຜົນຕອບແທນ, ການຫຼຸດຜ່ອນຄວາມບໍ່ໝັ້ນຄົງດັ່ງກ່າວແມ່ນເປັນຜົນປະໂຫຍດຕໍ່ກັບທຸລະກິດ.
ຄວາມໂປ່ງໃສຕໍ່ກັບການຊຳລະທີ່ໄດ້ຈ່າຍໃຫ້ກັບລັດຖະບານຍັງສາມາດຊ່ວຍຊີ້ໃຫ້ເຫັນເຖິງການປະກອບສ່ວນໃນການລົງທຶນຂອງເຂົາເຈົ້າທີ່ປະກອບໃຫ້ກັບປະເທດ.

- ຜົນປະໂຫຍດຕໍ່ກັບອົງການຈັດຕັ້ງທາງສັງຄົມມາຈາກ ການເພີ່ມປະລິມານຂໍ້ມູນກ່ຽວກັບລາຍຮັບຢູ່ໃນຂອບເຂດສາທາລະນະທີ່ ລັດຖະບານຄຸ້ມຄອງໃນນາມຂອງພົນລະເມືອງ, ຈຶ່ງເຮັດໃຫ້ການສ້າງການປົກຄອງມີຄວາມຮັບຜິດຊອບຫຼາຍຂຶ້ນ.

### *ການລວມຕົວດຳເນີນບໍ່ແຮ່ຂະໜາດນ້ອຍ ແລະ ແບບຫັດຖະກຳ*

ຫຼາຍລ້ານຄົນໃນທົ່ວໂລກ, ລວມທັງທີ່ຢູ່ໃນ ສປປ ລາວ, ຫາລ້ຽງຊີບໂດຍຜ່ານການດຳເນີນງານທາງດ້ານບໍ່ແຮ່ຂະໜາດນ້ອຍ ແລະ ບໍ່ຄ່ອຍຈະເປັນທາງການ. ການເຮັດບໍ່ແຮ່ແບບຫັດຖະກຳນັ້ນອາດຈະຊ່ວຍເປັນແຫຼ່ງລາຍຮັບອັນສຳຄັນ, ແຕ່ມັນຍັງໄດ້ສະແດງອອກເຖິງສະພາບການເຮັດວຽກທີ່ບໍ່ດີ, ລາຍຮັບທາງດ້ານສິ່ງແວດລ້ອມທີ່ຮຸນແຮງ,ບັນຫາທາງດ້ານສຸຂະພາບແລະຄວາມຂັດແຍ່ງລະຫວ່າງຜູ້ຂຸດຄົ້ນບໍ່ແຮ່, ບໍລິສັດ ແລະ ລັດຖະບານ[21]. ຢູ່ໃນ ສປປ ລາວ, ການດຳເນີນບໍ່ແຮ່ແບບຫັດຖະກຳ ແມ່ນເປັນແຫຼ່ງການດຳລົງຊີວິດດັ້ງເດີມສຳລັບຊຸມຊົນຢູ່ໃນຊົນນະບົດຢູ່ໃນພາກຕ່າງໆຂອງປະເທດມາເປັນເວລາດົນນານ ແລະ ໄດ້ພິສູດໃຫ້ເຫັນວ່າມາດຕະການຄວບຄຸມຜ່ານມາແມ່ນບໍ່ປະສົບຜົນສຳເລັດ.

ການລວມກັນໃນການດຳເນີນບໍ່ແຮ່ແບບຫັດຖະກຳເຂົ້າໄປສູ່ລະບົບການຄວບຄຸມ ແລະ ການຕິດຕາມທີ່ເປັນທາງການ ອາດຈະຊ່ວຍໃຫ້ມີວິທີການຄຸ້ມຄອງຜົນກະທົບ ທີ່ດີກວ່າໄດ້. ຕົວຈິງແລ້ວ, ກົດໝາຍແຮ່ທາດສະບັບໃໝ່ (2008) ເປັນບາດກ້າວໄປສູ່ ທິດທາງດັ່ງກ່າວ, ເຊິ່ງໄດ້ລະບຸເຖິງການອອກໃບອະນຸຍາດໃຫ້ກັບຜູ້ເຮັດບໍ່ແຮ່ແບບຫັດຖະກຳ ແລະ ຂະໜາດນ້ອຍ. ການສ້າງຕັ້ງຄະນະກຳມະການບໍ່ແຮ່ແບບຫັດຖະກຳ ເພື່ອສົ່ງເສີມການພັດທະນາການດຳເນີນບໍ່ແຮ່ຂະໜາດນ້ອຍແລະ ຮັບປະກັນໃຫ້ມາດຕະຖານທາງດ້ານສຸຂະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ ໄດ້ຮັບການປະຕິບັດນັ້ນກໍໄດ້ຮັບການສະເໜີແນະອອກເຊັ່ນດຽວກັນ[22].

*Box 3: ຫຼັກການທົ່ວໄປ 10 ຂໍ້ຂອງ ICMM*

- ຈັດຕັ້ງປະຕິບັດ ແລະເອົາໃຈໃສ່ການດຳເນີນທຸລະກິດທີ່ມີຈັນຍາບັນ ແລະລະບົບການປົກຄອງບໍລິສັດທີ່ດີ.
- ປະສົມປະສານຜົນຕອບແທນການພັດທະນາທີ່ຍືນຍົງຢູ່ພາຍໃນຂະບວນການຕັດສິນໃຈຂອງບໍລິສັດ.
- ສົ່ງເສີມສິດທິມະນຸດຂັ້ນພື້ນຖານ ແລະວັດທະນະທຳອັນໜ້ານັບຖື, ຮີດຄອງປະເພນີ ແລະຄ່ານິຍົມໃນການຈັດການກັບລູກຈ້າງ ແລະຜູ້ອື່ນໆທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງພວກເຮົາ.
- ຈັດຕັ້ງປະຕິບັດຍຸດທະສາດການຄຸ້ມຄອງຄວາມສ່ຽງອີງໃສ່ຂໍ້ມູນທີ່ນຳໃຊ້ໄດ້ ແລະວິທະຍາສາດອັນດີ.
- ສະແຫວງຫາການປັບປຸງຕໍ່ເນື່ອງໃນການປະຕິບັດດ້ານສຸຂະພາບ ແລະຄວາມປອດໄພຂອງພວກເຮົາ.
- ສະແຫວງຫາການປັບປຸງຕໍ່ເນື່ອງໃນການປະຕິບັດດ້ານສິ່ງແວດລ້ອມຂອງພວກເຮົາ.
- ປະກອບສ່ວນຕໍ່ການອະນຸລັກຊີວະນາໆພັນ ແລະມີແນວທາງແບບປະສົມປະສານຕໍ່ກັບການວາງແຜນນຳໃຊ້ທີ່ດິນ
- ອຳນວຍຄວາມສະດວກ ແລະຊຸກຍູ້ໃຫ້ມີຄວາມຮັບຜິດຊອບໃນການອອກແບບຜະລິດຕະພັນ, ນຳໃຊ້, ນຳໃຊ້ຄືນໃໝ່, ການນຳຜະລິດຕະພັນມາໃຊ້ຄືນໃໝ່ ແລະການກຳຈັດຜະລິດຕະພັນຂອງພວກເຮົາ.
- ປະກອບສ່ວນຕໍ່ການພັດທະນາທາງດ້ານສັງຄົມ, ເສດຖະກິດ ແລະ ສະຖາບັນຂອງຊຸມຊົນຢູ່ໃນບ່ອນທີ່ພວກເຮົາດຳເນີນງານ.
- ຈັດຕັ້ງປະຕິບັດການພົວພັນ, ການສື່ສານທີ່ມີປະສິດທິພາບ ແລະໂປ່ງໃສ ແລະໄດ້ຮັບການພິສູດການຈັດການລາຍງານຢ່າງເປັນເອກະລາດກັບພາກສ່ວນທີ່ກ່ຽວຂ້ອງຂອງພວກເຮົາ

(ແຫຼ່ງຂໍ້ມູນ: http://www.icmm.com/our-work/sustainable-development-framework/10-principles)

---

[21] Oxfam Australia, 2010.

[22] ສູນຂໍ້ມູນເສດຖະກິດ, 2008.

*PEI ແມ່ນຫຍັງ?*

ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະອົງການ ສະຫະປະຊາຊາດ ເພື່ອສິ່ງແວດລ້ອມ (UNEP) ສະໜັບ ສະໜູນ ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI), ເປັນໂຄງການທີ່ເລັ່ງໃສ່ ເພື່ອເຊື່ອມໂຍງບັນຫາທາງດ້ານຄວາມທຸກຍາກ ແລະ ສິ່ງແວດລ້ອມເຂົ້າສູ່ ຂະບວນການວາງແຜນ ແລະ ການພັດທະນາລະດັບຊາດ. ຈຸດປະສົງຂອງ PEI ຢູ່ໃນ ສປປ ລາວ ແມ່ນເພື່ອຮັບປະກັນການເຕີບໂຕ ທາງດ້ານເສດ ຖະກິດທີ່ໄວຂອງປະເທດ ສ້າງໃຫ້ເກີດການພັດທະນາທີ່ຍືນຍົງ ແບບຮອບດ້ານ. PEI ສະໜັບສະໜູນ ການສ້າງຄວາມຮູ້ຄວາມສາມາດ ທາງດ້ານ ສະຖາບັນໃນການວາງແຜນ ການພັດທະນາລະດັບຊາດ ແລະ ການຄຸ້ມຄອງການລົງທຶນເອກະຊົນ, ການສ້າງບົດແນະນຳການປະເມີນຜົນ ກະທົບທາງດ້ານສັງຄົມ ແລະສິ່ງແວດລ້ອມ, ແລະ ການສ້າງການຄົ້ນຄວ້າ ທີ່ອີງໃສ່ຫຼັກຖານກ່ຽວກັບມູນຄ່າທາງດ້ານສັງຄົມ ແລະ ສິ່ງແວດລ້ອມຕໍ່ກັບ ການຕັດສິນໃຈນຳໃຊ້ທີ່ດິນ. ໂຄງການໄດ້ຮັບການປະສານງານໂດຍທາງ ກະຊວງແຜນການ ແລະການລົງທຶນ ໂດຍທີ່ທາງອົງປະກອບຂອງໂຄງການ ແມ່ນໄດ້ຮັບການຄຸ້ມຄອງ ໂດຍກົມແຜນການ, ກົມສົ່ງເສີມການລົງທຶນ, ສະ ຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

**www.unpei.org/programmes/country_profiles/lao-pdr.asp**

**ຂໍ້ມູນຕິດຕໍ່ສຳລັບ PEI ຢູ່ໃນ ສປປ ລາວ ແມ່ນ:**
pei.lao@undp.org

ບົດລາຍງານຫຍໍ້ດ້ານນະໂຍບາຍນີ້ແມ່ນທາງອົງການ IUCN ປະຈຳລາວ ເປັນຜູ້ກະກຽມພາຍໃຕ້ການອຸປະຖຳຂອງໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ.

IUCN, **ອົງການສາກົນເພື່ອການອະນຸລັກທຳມະຊາດ**, ຊ່ວຍໂລກຊອກຫາ ທາງອອກທີ່ເປັນຄວາມຈິງ ຕໍ່ກັບສະພາບແວດລ້ອມທີ່ກົດດັນເກືອບທັງໝົດ ຂອງພວກເຮົາ ແລະ ສິ່ງທ້າທາຍໃນການພັດທະນາ ໂດຍການສະໜັບ ສະໜູນການຄົ້ນຄວ້າທາງດ້ານວິທະຍາສາດ; ການຄຸ້ມຄອງໂຄງການໃນ ພາກສະໜາມເກືອບທັງໝົດໃນທົ່ວໂລກ; ແລະ ການນຳເອົາລັດຖະບານ, NGOs, UN, ສົນທິສັນຍາສາກົນ ແລະ ບໍລິສັດຕ່າງໆ ເຂົ້າມາຮ່ວມສ້າງ ນະໂຍບາຍ, ກົດໝາຍ ແລະ ການປະຕິບັດການທີ່ດີທີ່ສຸດ. ຢູ່ໃນເຄືອຄ່າ ຍທາງດ້ານສິ່ງແວດລ້ອມ ຂອງໂລກໃຫຍ່ທີ່ສຸດ ແລະ ເກົ່າແກ່ທີ່ສຸດ ນັ້ນ, IUCN ເປັນສະຫະພັນສະມາຊິກປະຊາທິປະໄຕ ຮ່ວມກັບອົງການຈັດ ຕັ້ງທີ່ເປັນຂອງລັດ ແລະ ຂອງ NGO ຫຼາຍກວ່າ 1,000 ອົງການ ແລະ ມີນັກວິທະຍາສາດ ແລະ ຜູ້ຊ່ຽວຊານອາສາສະໝັກໃນຈຳນວນເກືອບ 11,000 ຄົນຢູ່ໃນ 160 ປະເທດ. ວຽກງານຂອງ IUCN ໄດ້ຮັບການ ສະໜັບສະໜູນ ໂດຍພະນັກງານມືອາຊີບຫຼາຍກວ່າ 1,000 ຄົນຢູ່ໃນ 60 ກວ່າຫ້ອງການ ແລະ ມີຄູ່ຮ່ວມງານຫຼາຍຮ້ອຍພາກສ່ວນຢູ່ໃນພາກລັດ, NGO ແລະ ພາກເອກະຊົນໃນທົ່ວໂລກ. ສຳນັກງານໃຫຍ່ຂອງ IUCN ແມ່ນຕັ້ງຢູ່ໃນເມືອງ Gland, ໃກ້ກັບນະຄອນຫຼວງ Geneva, ໃນປະເທດ Switzerland.

**www.iucn.org**


*ພາບໂດຍ: IUCN*

ການປະກອບຄຳຄິດຄຳເຫັນ ທີ່ບັນລະຍາຍຢູ່ໃນສິ່ງພິມນີ້ ແມ່ນເປັນຂອງຜູ້ຂຽນ ຊຶ່ງບໍ່ກ່ຽວຂ້ອງກັບກະຊວງແຜນການ ແລະ ການລົງທຶນ ຢູ່ ສປປ ລາວ